ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 59 /ສພຂ.ຊຍ

ໄຊຍະບູລີ, ວັນທີ 28 ສິງຫາ 2023

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ບົດລາຍງານ ຂອງອົງການປົກຄອງແຂວງ ໃນວັນທີ 23 ສິງຫາ 2023 ກ່ຽວກັບການຈັດຕັ້ງ ປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາຢ່າງເລິກເຊິ່ງ ກວ້າງຂວາງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025. ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງກາງສະໄໝ ຂອງແຜນການ 5 ປີ (2021-2025)**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ຕໍ່ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ການສະຫຼຸບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດໄລຍະກາງສະໄໝ ຂອງແຜນການ 5 ປີ (2021-2025) ດັ່ງນີ້:

1. **ດ້ານລາຍຮັບ:** ປະຕິບັດໄດ້ທັງໝົດ 3.198,90 ຕື້ກີບ, ເທົ່າກັບ 61,77% ຂອງແຜນການ 5 ປີ, ໃນນີ້:
   - **ລາຍຮັບພູດສຸມກາງ:** ປະຕິບັດໄດ້ 2.277,02 ຕື້ກີບ, ເທົ່າກັບ 54,88% ຂອງແຜນການ 5 ປີ;
   - **ລາຍຮັບພາຍໃນແຂວງ:** ປະຕິບັດໄດ້ 921,87 ຕື້ກີບ, ເທົ່າກັບ 89,49% ຂອງແຜນການ 5 ປີ, ໃນນີ້:

+ ສ່ວຍສາອາກອນ: ປະຕິບັດໄດ້ 672,65 ຕື້ກີບ, ເທົ່າກັບ 66,75% ຂອງແຜນການ 5 ປີ;

+ ຊັບສິນຂອງລັດ: ປະຕິບັດໄດ້ 248,82 ຕື້ກີບ, ເທົ່າກັບ 1.113,29% ຂອງແຜນການ 5 ປີ;

+ ວິສາຫະກິດລັດລົງທຶນ: ປະຕິບັດໄດ້ 393,59 ລ້ານກີບ, ເທົ່າກັບ 7.871,78% ຂອງແຜນການ 5 ປີ.

2. **ດ້ານລາຍຈ່າຍ:** ປະຕິບັດໄດ້ 1.352,21 ຕື້ກີບ, ເທົ່າກັບ 44,57% ຂອງແຜນການ 5 ປີ.

**ມາດຕາ 2 ຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ທ້າຍສະໄໝ ຮອດປີ 2025**

ກອງປະຊຸມເຫັນດີເປັນເອກະພາບ ຮັບຮອງເອົາແຜນວຽກຈຸດສຸມ ແລະ ຄາດໝາຍສູ້ຊົນທີ່ວາງໄວ້ ໃນແຕ່ລະດ້ານ ດັ່ງນີ້:

1. **ດ້ານລາຍຮັບ:** ສູ້ຊົນເກັບລາຍຮັບທ້າຍສະໄໝ ໃຫ້ໄດ້ 3.640,94 ຕື້ກີບ ເທົ່າກັບ 70,31% ຂອງ ແຜນການ 5 ປີ ໃນນີ້:
   - **ລາຍຮັບພູດສູນກາງ:** ໃຫ້ໄດ້ 2.483,49 ຕື້ກີບ, ເທົ່າກັບ 59,87% ຂອງແຜນການ 5 ປີ;
   - **ລາຍຮັບພາຍໃນແຂວງ:** ໃຫ້ໄດ້ 1.157,45 ຕື້ກີບ, ເທົ່າກັບ 112,37 % ຂອງແຜນການ 5 ປີ ໃນນີ້:

     + ສ່ວຍສາອາກອນ: ສູ້ຊົນໃຫ້ໄດ້ 1.028,81 ຕື້ກີບ, ເທົ່າກັບ 99,88 % ຂອງແຜນການ 5 ປີ;

     + ຄຸ້ມຄອງຊັບສິນຂອງລັດ: ສູ້ຊົນໃຫ້ໄດ້ 128,64 ລ້ານກີບ, ເທົ່າກັບ 575,57 % ຂອງແຜນການ 5 ປີ;
2. **ດ້ານລາຍຈ່າຍ:** ເອົາໃຈໃສ່ຄຸ້ມຄອງລາຍຈ່າຍໃນທ້າຍສະໄໝ ໃຫ້ຢູ່ໃນລະດັບ 1.351,50 ຕື້ກີບ, ເທົ່າກັບ 45,46% ຂອງແຜນການ 5 ປີ;
3. **ດຸນດ່ຽງງົບປະມານ:** ຄາດຄະເນຮອດ ປີ 2025 ປະມານ 194,05 ຕື້ກີບ ເທົ່າກັບ 9,99% ຂອງແຜນການ 5 ປີ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ທ້າຍສະໄໝຮອດປີ 2025**

ກອງປະຊຸມ ເຫັນດີເປັນເອກະພາບຮັບຮອງເອົາ 6 ມາດຕະການດ້ານລາຍຮັບ ແລະ 3 ມາດຕະການ ດ້ານລາຍຈ່າຍ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ທ້າຍສະໄໝໃຫ້ບັນລຸຕາມແຜນການ 5 ປີ ທີ່ວາງໄວ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1. ເອົາໃຈໃສ່ນຳພາ-ຊີ້ນຳການຄຸ້ມຄອງ ລາຍຮັບອາກອນປະເພດຕ່າງໆ, ຄ່າເຊົ່າ-ສຳປະທານ, ຄ່າຊັບພະຍາກອນ, ຄ່າພາກຫຼວງ, ຂາຍຊັບສິນທີ່ຖືກຍຶດ, ພາສີທີ່ດິນ ແລະ ຄ່າທຳນຽມທາງ, ລາຍຮັບຄ່າທຳນຽມ-ຄ່າບໍລິການຕ່າງໆ ຕິດພັນກັບການກວດກາ, ເກັບກຳຂໍ້ມູນຖານລາຍຮັບຕ່າງໆ ທີ່ບໍ່ມີຊ້ອນເກັບບໍ່ໝົດ;
2. ສືບຕໍ່ຈັດເກັບລາຍຮັບຫົວໜ່ວຍງົບປະມານ ທີ່ກະຊວງການເງິນໂອນໃຫ້ແຂວງຈຳນວນ 13 ຫົວໜ່ວຍ ພ້ອມທັງປະສານສົມທົບ ກັບ ກະຊວງການເງິນ ເພື່ອຄົ້ນຄວ້າບັນດາບໍລິສັດອື່ນໆທີ່ມີເງື່ອນໄຂ;
3. ສືບຕໍ່ຊຸກຍູ້ການສ້າງກົນໄກການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ ໃຫ້ເປັນລະບົບ ແລະ ທັນໄປສູ່ທັນສະໄໝ ຮັບປະກັນໃຫ້ການສ້າງແຜນ ການຈັດຕັ້ງປະຕິບັດ, ການສະຫຼຸບລາຍງານໃຫ້ຖືກຕ້ອງຄົບຖ້ວນ ສາມາດກວດສອບໄດ້;

4. ສືບຕໍ່ຊຸກຍູ້ ແກ້ໄຂການປະຕິບັດ ລາຍຮັບ-ລາຍຈ່າຍ ທີ່ຕິດພັນກັບຜົນການກວດສອບ ຜ່ານມາໃຫ້ມີທ່າອ່ຽງເພີ່ມຂຶ້ນ;
5. ເພີ່ມທະວີວຽກງານຕິດຕາມກວດກາ ການປະຕິບັດແຜນລາຍຮັບ-ລາຍຈ່າຍງົບປະມານໃຫ້ໄປຕາມກົດໝາຍ ແລະ ລະບຽບການກໍານົດຢ່າງເຂັ້ມງວດ;
6. ສືບຕໍ່ປະຕິບັດດໍາລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 205/ນຍ, ລົງວັນທີ 22 ກໍລະກົດ 2022 ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ.

ມາດຕາ 4 ການຈັດຕັ້ງປະຕິບັດ.

1. ມອບໃຫ້ອົງການປົກຄອງແຂວງ ນໍາພາ-ຊີ້ນໍາ ບັນດາພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ບັນດາຄະນະກໍາມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

ມາດຕາ 5 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄໍາພັນເພັງ